ສົ່ງ: ທ່ານ ຫົວໜ້າສານັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ

ເລກທີ...0916...

ວັນທີ..19 SEP 2016

ໂທລະສັບ 021 217770

ເລກທີ: 38 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 16 ກັນຍາ 2016

## ລາຍງານການເຄື່ອນໄຫວປະຈຳອາທິດ
## ທີ 05-09/09/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
## ຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິລະບຽບວິໄນຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຂັ້ມງວດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມຫຼັກການລວມສູນປະຊາທິປະໄຕ ເຮັດວຽກເປັນໝູ່ຄະນະບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາອ່ອນຄ່າລົງ 0,82% ເມື່ອທຽບໃສ່ເງິນເອີໂຣ ແລະ ແຂງຄ່າຂຶ້ນເມື່ອທຽບກັບຫຼາຍສະກຸນເງິນຂອງພາກພື້ນ, ຍ້ອນເສດຖະກິດຂອງສະຫະລັດມີທ່າອ່ຽງອ່ອນຄ່າລົງ ຊຶ່ງເຫັນໄດ້ຈາກຕົວເລກດັດຊະນີພາກການບໍລິການ ຫຼຸດລົງ 55,5 ມາເປັນ 51,4 ໃນເດືອນ 8/2016 ບວກກັບ ທະນາຄານກາງສະຫະພາບເອີຣົບຍັງສືບຕໍ່ຮັກສາອັດຕາດອກເບ້ຍໄວ້ໃນລະດັບຕໍ່າທີ່ລະດັບ 0%.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 19/08/2016 | ອາທິດນີ້ 26/08/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1180 | 1,1272 | -0,82% |
| ໂດລາ/ເຢນ | 103,62 | 102,18 | 1,41% |
| ໂດລາ/ບາດ | 34,630 | 34,730 | -0,29% |
| ໂດລາ/ເປໂຊ | 46,70 | 47,25 | -1,17% |
| ໂດລາ/ຣູເປັຍ | 13.249 | 13.097 | 1,16% |
| ໂດລາ/ໂດລາສິງກະໂປ | 1,3601 | 1,3542 | 0,44% |
| ໂດລາ/ຢວນ | 6,6831 | 6,6778 | 0,08% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 8,14% ຈາກ 45,82 ໂດລາ/ບາເຣວ ມາເປັນ 49,55 ໂດລາ/ບາເຣວ ພາຍຫຼັງສຳນັກງານດ້ານພະລັງງານຂອງສະຫະລັດ (EIA) ລາຍງານຕົວເລກປະລິມານນ້ຳມັນໃນຄັງ ຫຼຸດລົງ 14,5 ລ້ານບາເຣວ ມາຢູ່ທີ່ລະດັບ 511 ລ້ານບາເຣວ ໃນວັນທີ 02/09/2016 ຍ້ອນການນຳເຂົ້ານ້ຳມັນ ຫຼຸດລົງເຫຼືອ 2,5 ລ້ານບາເຣວ/ວັນ. ສຳລັບລາຄາຄຳເພີ່ມຂຶ້ນ 1,77% ເປັນ 1.335,67 ໂດລາ/ອອນ ຍ້ອນການອ່ອນຄ່າຂອງເງິນໂດລາສະຫະລັດ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,04% ສຳລັບອັດຕາ ທທກ ແຕ່ ແຂງຄ່າຂຶ້ນ 0,01% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,24% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,09% ສຳລັບອັດຕາຕະຫຼາດ. ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,71% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,78% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 2,47% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 2,14% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 02/09/2016 | | | ອາທິດນີ້ 09/09/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.083,27 | 8.112,00 | 8.092,10 | 8.082,23 | 8.111,00 | 8.095,36 | 0,01% | 0,01% | -0,04% |
| ບາດ | 233,56 | 234,93 | 234,63 | 232,79 | 234,20 | 234,07 | 0,33% | 0,31% | 0,24% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8,124.38 | 8,152.50 | 8,138.44 | 8,123.07 | 8,152.85 | 8,137.96 | 0,02% | 0,00% | 0,01% |
| ບາດ | 233.69 | 234.49 | 234.09 | 233,47 | 234,31 | 233,89 | 0,10% | 0,08% | 0,09% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,51% | 0,50% | 0,57% | 0,51% | 0,52% | 0,53% | | | |
| ບາດ | 0,06% | -0,19% | -0,23% | 0,29% | 0,05% | -0,08% | | | |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 1,77% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຫຼຸດລົງ 0,01%;

- ປະລິມານເງິນ M2 ເພີ່ມຂຶ້ນ 3,63% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 17,22%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 05-09/09/2016) ເຫັນວ່າ ທທກ ຊື້ໂດລາສຸດທິ 31,72 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 54,26 ລ້ານໂດລາ ແລະ ຂາຍໂດລາໄດ້ 22,54 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.195,00 ລ້ານບາດ (ໃນນີ້ ຊື້ບາດໄດ້ 282,95 ລ້ານບາດ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ແລະ ຂາຍບາດໄດ້ 1,477.94 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 32,52% ແລະ ຫຼຸດລົງ 5,70% ສຳລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈຳນວນ 1,50 ລ້ານໂດລ້ານ ແລະ ເງິນບາດບໍ່ມີການເຄື່ອນໄຫວຊື້-ຂາຍ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 6,40 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 3 ລ້ານບາດ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາສຸດທິ ຈຳນວນ 30,17 ລ້ານໂດລາ ແລະ ຊື້ບາດ ຈຳນວນ 0,37 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 29/08-02/09/2016 | | ອາທິດທີ 05-09/09/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **82,76** | **361,88** | **54,26** | **282,95** | **-34,44%** | **-21,81%** |
| - ທ/ຄທຸລະກິດລັດ | 13,03 | 155,90 | 8,62 | 168,35 | -33,80% | 7,99% |
| - ທ/ຄທຸລະກິດອື່ນໆ | 69,73 | 205,98 | 45,63 | 114,59 | -34,56% | -44,37% |
| 2. ການຂາຍເງິນຕາຕ່າງປະເທດ | **31,05** | **1.505,52** | **22,54** | **1.477,94** | **-27,42%** | **-1,83%** |
| - ທ/ຄທຸລະກິດລັດ | 14,01 | 183,80 | 14,30 | 144,84 | 2,10% | -21,20% |
| - ທ/ຄທຸລະກິດອື່ນໆ | 17,04 | 1.321,72 | 8,23 | 1.333,10 | -51,69% | 0,86% |
| ຊື້-ຂາຍສຸດທິ ທທກ | **51,71** | **-1.143,65** | **31,72** | **-1.195,00** | **-38,65%** | **4,49%** |
| - ຜິດດ່ຽງ ຊື້-ຂາຍ | 62,48% | -316,03% | 58,46% | -422,34% | -6,43% | 33,64% |
| - ມູນຄ່າການຊື້-ຂາຍ | **113,81** | **1.867,40** | **76,79** | **1.760,89** | **-32,52%** | **-5,70%** |
| 3. ການຊື້ຂາຍລະຫວ່າງທຫລ ກັບ ທທກ | **-8,85** | **-2,00** | **-6,40** | **-3,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 8,85 | 2,00 | 6,40 | 3,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **0,20** | **8,00** | **1,50** | **0,00** | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | **0,73** | **0,26** | **30,17** | **0,37** | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 5,05 | 0,31 | 30,19 | 0,37 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 4,32 | 0,05 | 0,03 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 08/2016 ຢູ່ໃນລະດັບ 1,85% ຫຼຸດລົງຈາກ 1,97% ໃນເດືອນ 07/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 71,2 ລ້ານໂດລາສະຫະລັດທຽບເທົ່າ ເພີ່ມຂຶ້ນ 41,6% ເມື່ອທຽບໃສ່ອາທິດຜ່ານມາ.

III. ວຽກງານວິຊາສະເພາະ

1. ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 1.037 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 396 ສະບັບ ເທົ່າກັບ 61,77% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 396,54 ຕື້ກີບ ເພີ່ມຂຶ້ນ 28,35% ເມື່ອທຽບໃສ່ອາທິດຜ່ານມາ.

ການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (19-25/08/2016) ມີຈໍານວນ 2.018 ຄັ້ງ ໂດຍມີມູນຄ່າ 350,47 ຕື້ກີບ ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 506 ຄັ້ງ.

2. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.014,83 ຈຸດ ເພີ່ມຂຶ້ນ 1,88% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 204.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 997,84 ລ້ານກີບ ເພີ່ມຂຶ້ນ 35,31% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 82,50% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.775 ກີບ/ຮຸ້ນ ເພີ່ມຂຶ້ນ 228 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 23.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 112,22 ລ້ານກີບ ຫຼຸດລົງ 71,67% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 59,18% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,34%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.899 ກີບ/ຮຸ້ນ ເພີ່ມຂຶ້ນ 63 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 180.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 883,23 ລ້ານກີບ ຫຼຸດລົງ 16,74% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 95,75% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 6.300 ກີບ/ຮຸ້ນ ເພີ່ມຂຶ້ນ 100 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ມີມູນຄ່າການຊື້-ຂາຍ 0,63 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50% ຂອງມູນຄ່າການຊື້-ຂາຍຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາປິດ 2.514 ກີບ/ຮຸ້ນ ຫຼຸດລົງ 51 ກີບ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,76 ລ້ານກີບ ຫຼຸດລົງ 97,95% ກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50% ຂອງມູນຄ່າການຊື້-ຂາຍຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດ 3.100 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[6].

---

ລາຄາສະເລ່ຍ ແມ່ນລາຄາທີ່ສະເລ່ຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[6]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສຳເລັດ: ❶ ເຂົ້າຮ່ວມລາຍງານຕໍ່ກອງປະຊຸມກົມການເມືອງຮ່ວມຄະນະເລຂາທິການສູນກາງພັກ ທີ່ຫ້ອງວ່າການສູນກາງພັກ ຫຼັກ 6, ❷ ເຂົ້າຮ່ວມກອງປະຊຸມຄະນະປະຈຳພັກ-ຄະນະຜູ້ວ່າການ ທຫລ ປະຈຳເດືອນ ສິງຫາ 2016 ທີ່ ຫ້ອງປະຊຸມໃຫຍ່ ທຫລ, ❸ ເຂົ້າຮ່ວມຮັບຟັງປະຖະກະຖາ ວັນລັດຖະທຳມະນູນແຫ່ງ ສປປ ລາວ ຄົບຮອບ 2 ປີ ທີ່ຫ້ອງວ່າການສູນກາງພັກ, ❹ ເຂົ້າຮ່ວມຢ້ຽມຢາມ ແລະ ແລກປ່ຽນບົດຮຽນກ່ຽວກັບວຽກງານກຳມະບານ ກັບຫວຽດນາມ ຢູ່ທີ່ ສສ. ຫວຽດນາມ, ❺ ໄປເຄື່ອນໄຫວວຽກງານຢູ່ 2 ແຂວງພາກເໜືອ ແຂວງຊຽງຂວາງ ແລະ ແຂວງຫົວພັນ, (ຂໍ້ມູນນີ້ແມ່ນຂໍ້ມູນຂອງອາທິດທີ 29/08/-02/09/2016);

- ສຳເລັດການເຂົ້າຮ່ວມ: ❶ ກອງປະຊຸມປຶກສາຫາລືກັບຕະຫຼາດຫຼັກຊັບຊຽງໄຮ້ ສປ. ຈີນ ຢູ່ທີ່ສຳນັກງານ ຄຄຊ, ❷ ກອງປະຊຸມປະຈຳປີຂອງກຸ່ມອາຊີບປາຊີຟິກເພື່ອຕ້ານການຟອກເງິນ (2016 APG annual meeting) ທີ່ປະເທດ ສ. ອາເມລິກາ, ❸ ເຂົ້າຮ່ວມຖອດຖອນບົດຮຽນກ່ຽວກັບ ການອອກແບບເງິນຕາ ຢູ່ໂຮງພິມທະນະບັດ ຫວຽດນາມ.

4. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ກະກຽມ: ❶ ສືບຕໍ່ເຂົ້າລາຍງານຕໍ່ກອງປະຊຸມກົມການເມືອງຮ່ວມກັບຄະນະເລຂາທິການສູນກາງພັກ ທີ່ຫ້ອງວ່າການສູນກາງພັກ, ❷ ເປັນປະທານກອງປະຊຸມຄະນະປະຈຳພັກ-ຄະນະຜູ້ວ່າການ ທຫລ ປະຈຳເດືອນ ສິງຫາ 2016 ທີ່ ທຫລ, ❸ ເຂົ້າຮ່ວມກອງປະຊຸມລະດົມຄວາມຄິດ ກ່ຽວກັບຮ່າງຂໍ້ຕົກລົງ 4 ສະບັບ ຕິດພັນກັບວຽກງານຫລັກຊັບ ທີ່ ທຫລ, ❹ ເຂົ້າຮ່ວມກອງປະຊຸມຄະນະ ຄຄຊ ທີ່ ທຫລ, ❺ ຮັບແຂກທະນາຄານ ມາຣູຮານເຈແປນ ລາວ ຈຳກັດ ທີ່ ທຫລ, ❻ ເຂົ້າຮ່ວມຢ້ຽມຢາມແລກປ່ຽນບົດຮຽນກ່ຽວກັບວຽກງານກຳມະບານກັບຫວຽດນາມ ທີ່ ສສ. ຫວຽດນາມ, ❼ ເຂົ້າຮ່ວມກອງປະຊຸມຄະນະ NCC ທີ່ ທຫລ, (ຂໍ້ມູນນີ້ແມ່ນຂໍ້ມູນຂອງອາທິດທີ 29/08/-02/09/2016);

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;

- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ ຄົ້ນຄວ້າກ່ຽວກັບການກຳນົດຮູບແບບ ແລະ ທ່າອ່ຽງຂອງການຟອກເງິນ (Typology) ຂອງ ສປປ ລາວ;

- ສືບຕໍ່ສ້າງປຶ້ມຄູ່ມືຖອດຖອນບົດຮຽນການເປັນປະທານ ແລະ ເຈົ້າພາບກອງປະຊຸມຂັ້ນສູງວຽກງານອາຊຽນ ແລະ ອາຊຽນ+3 ຂອງຂະແໜງການທະນາຄານ ທີ່ນະຄອນຫຼວງວຽງຈັນ;

- ສືບຕໍ່ລົງສຳຫຼວດຖານະການລົງທຶນລະຫວ່າງປະເທດ (IIP Survey) ພາກສະໜາມ 3 ແຂວງພາກກາງ ແລະ 4 ແຂວງພາກໃຕ້;

- ສືບຕໍ່: ❶ ກະກຽມເປີດກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈຳປີ 2016, ❷ ກະກຽມເປີດກອງປະຊຸມສະພາບໍລິຫານ ສະຖາບັນການທະນາຄານ ສະໄໝສາມັນ ຄັ້ງທີ II ປະຈຳປີ 2016;

- ກະກຽມການເປັນເຈົ້າພາບຈັດກອງປະຊຸມສົ່ງເສີມການຮ່ວມມື ລະຫວ່າງ ທະນາຄານທຸລະກິດ ລາວ-ໄທ ຄັ້ງທີ V ທີ່ນະຄອນຫຼວງວຽງຈັນ;

- ສືບຕໍ່ກະກຽມເນື້ອໃນສຳລັບການສຳມະນາລະດັບສູງ SEACEN-BIS ແລະ ກອງປະຊຸມປະຈຳປີລະດັບຮອງຜູ້ວ່າການ SEACEN EXCO ຄັ້ງທີ 15 ທີ່ປະເທດຟີລິບປິນ;

- ກອງປະຊຸມພົບປະໂອ້ລົມຂອງທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ